ວຽກງານການສະໜອງຊີມັງໃຫ້ໂຄງການ

ປີ 2019 ກໍ່ເປັນອີກປີໜຶ່ງທີ່ມີຄວາມເຮັ່ງຮ້ອນໃນການປະຕິບັດໂຄງການຂອງລັດຖະບານ ທີ່ມີການດຳເນີນຕາມແຜນພັດທະນາເສດຖະກິດກໍ່ຄືການສືບຕໍ່ກໍ່ສ້າງໂຄງການທາງລົດໄຟມິດຕະພາບລາວ-ຈີນ ແລະເສັ້ນທາງດ່ວນແຕ່ນະຄອນຫຼວງວຽງຈັນ-ວັງວຽງ ທີ່ມີເປົ້າໝາຍໃຫ້ສຳເລັດໃນອີກ 2 ປີຂ້າງໜ້າ ຊຶ່ງຮຽກຮ້ອງໃຫ້ທຸກຝ່າຍທັງພາກລັດ ແລະ ເອກະຊົນ ຕ້ອງໄດ້ຕັ້ງໜ້າປະກອບສ່ວນ ແລະຮ່ວມມືຢ່າງຫ້າວຫັນ ໃນຂະນະດຽວກັນ ບໍລິສັດຊີມັງລາວມະຫາຊົນ ກໍ່ຄື ໂຮງງານຊີມັງວັງວຽງຫລັງ2 ກໍ່ໄດ້ສຸມທຸກກຳລັງຂອງຕົນ ເພື່ອຜະລິດຊີມັງທີ່ຮັບປະກັນຄຸນນະພາບ ແລະສະໜອງໃຫ້ພຽງພໍກັບຄວາມຕ້ອງການຂອງໂຄງການດັ່ງກ່າວ ຊຶ່ງໃນປີ 2019 ນີ້ ຊີມັງກາກະທິງທອງຈະຕ້ອງໄດ້ສະໜອງໃຫ້ 2 ໂຄງການ ດັ່ງກ່າວໃນປະລິມານບໍ່ຕ່ຳກວ່າ 200,000 ໂຕນ ຈຶ່ງເປັນບັນຫາທີ່ທ້າທາຍ ທັງເປັນຄວາມພາກພູມໃຈຂອງໂຮງງານພວກເຮົາອີກດ້ວຍ.

水泥供应：

随着“一带一路”的步伐，老中铁路的不断推进和万荣-万象高速路的开工，这将迎来基础设施建设不断完善。2019 年既是老挝政府实施经济发展规划的绝佳年份。在各个项目的水泥供应上老挝水泥公众公司万荣水泥 II 秉承“金牛第一 服务至上”的办企理念，提供的“金牛”牌水泥得到了市场的认可，完整的售后服务体系得到了客户的信赖。2019 年公司全体员工齐心协力将为客户提供 20 万吨的水泥及优质的服务！

ໂຄງການທາງລົດໄຟລາວ-ຈີນ 中老铁路项目



ໂຄງການທາງດ່ວນວຽງຈັນ-ວັງວຽງ 万象-万荣高数公路项目

